ທະນາຄານອິນໂດຈີນ

INDOCHINA BANK





# 2010

# ບົດລາຍງານປະຈຳປີ

# ສາລະບານ


| ເນື້ອໃນ | ໜ້າ |
|---|---|
| ຂໍ້ມູນຂອງທະນາຄານ | 2 |
| ເຄືອຂ່າຍສາຂາ | 3 |
| ຜູ້ຖືຮຸ້ນ | 4 |
| ສະພາບໍລິຫານ | 5 |
| ຂໍ້ຄວາມຈາກທ່ານປະທານ | 6 |
| ສະພາບເສດຖະກິດໂດຍລວມຂອງລາວ | 7 |
| ຈຸດເດັ່ນທາງດ້ານການເງິນ | 8 - 9 |
| ໃບສະຫຼຸບຊັບສິນບັດ | 10 |
| ໃບລາຍງານຜົນໄດ້ຮັບ | 11 |
| ໃບລາຍງານການປ່ຽນແປງຂອງທຶນ | 12 |
| ເອກະສານປະກອບຂອງບົດລາຍງານຖານະການເງິນ | 13 - 31 |
| ໂຄງການເພື່ອຊຸມຊົນ ແລະ ກິດຈະກຳ | 32 - 33 |

## ຂໍ້ມູນຂອງທະນາຄານ

**ຊື່ທະນາຄານ**

ທະນາຄານອິນໂດຈີນຈຳກັດ

**ໃບອະນຸຍາດເລກທີ**

53/BOL, 28th November 2008

**ປະທານສະພາບໍລິຫານ**

Mr. Oh Sei Young

**ຜູ້ອຳນວຍການໃຫຍ່**

Mr. Tay Hong Heng

**ສະຖານທີ່ຕັ້ງ**

ຊັ້ນ01, Capital tower 116ຖະໜົນ 23 ສິງຫາ
P.O.Box 6029ນະຄອນຫຼວງວຽງຈັນ, ສປປລາວ

**ເບີໂທຕິດຕໍ່**

Tel : +856 21 455 - 000 - 3
Fax : +856 21 455 - 111

**Web Address**

www.indochinabank.com

## ປະຫວັດຄວາມເປັນມາ

ທະນາຄານອິນໂດຈີນໄດ້ເປີດດຳເນີນງານຢ່າງເປັນທາງການໃນວັນທີ 06 ກຸມພາ 2009 ທີ່ນະຄອນຫຼວງວຽງຈັນ. ຜູ້ຖືຮຸ້ນຂອງທະນາຄານປະກອບດ້ວຍບຸກຄົນ ແລະ ບໍລິສັດທີ່ມີຊື່ສຽງພ້ອມທັງມີຄວາມເຂັ້ມແຂງ ແລະ ໝັ້ນຄົງທາງການເງິນ ເຊັ່ນ ສະມາຄົມນັກຮົບເກົ່າເກົາຫຼີ ແລະ ສະມາຄົມຊ່ວຍເຫຼືອລັດຖະກອນເກົາຫຼີ, ທ່ານ ໂອ ເຊ ຢັງ (ປະທານບໍລິສັດໂຄລາວຈຳກັດ) ແລະ ທ່ານນາງ ຖາວອນ ວົງສົມບັດ.

ທະນາຄານອິນໂດຈີນມີຄວາມຕັ້ງໜ້າທີ່ຈະສ້າງຕັ້ງຮາກຖານອັນເຂັ້ມແຂງຢູ່ໃນປະເທດໂດຍອີງໃສ່ຂໍ້ໄດ້ປຽບຈາກການຂະຫຍາຍຕົວທາງເສດຖະກິດທີ່ໝັ້ນຄົງຂອງ ສປປລາວ. ທະນາຄານອິນໂດຈີນຈະມີບົດບາດຫຼາຍຂຶ້ນໃນການຊຸກຍູ້ການຊົມໃຊ້ ແລະ ບໍລິໂພກພາຍໃນປະເທດເພື່ອເປັນການສົ່ງເສີມການຂະຫຍາຍຕົວຂອງເສດຖະກິດ. ມີການລະດົມທຶນທີ່ມີປະສິດຕິພາບເພື່ອນຳໃຊ້ເຂົ້າໃນກິດຈະກຳການປ່ອຍກູ້ໂດຍທະນາຄານເພື່ອສ້າງຜົນຕອບແທນທີ່ດີເລີດໃຫ້ແກ່ຜູ້ຖືຮຸ້ນ. ທະນາຄານອິນໂດຈີນນຳສະເໜີອັດຕາດອກເບ້ຍເງິນຝາກທີ່ດຶງດູດໃຈເພື່ອຜົນປະໂຫຍດຂອງບັນດາຜູ້ຝາກເງິນ. ກໍຄືກິດຈະກຳຂອງສິນເຊື່ອ, ທະນາຄານອິນໂດຈີນຂະຫຍາຍສິນເຊື່ອໃຫ້ແກ່ທຸກໆຂະແໜງເສດຖະກິດໃນອັດຕາການແຂ່ງຂັນທີ່ສູງ ແລະ ມີເງື່ອນໄຂທີ່ເໝາະສົມ.

## Branch Network

### Main Branch



Capital Tower, 116, 23 Singha Rd
P.O Box 6029, Vientiane Lao P.D.R
Phone: (+856-21) 455 000 - 3
Fax: (+856-21) 455 111

### Pakse Branch




Ban Phonekhong, Pakse
Champasak, Lao P.D.R
Phone: (+856-31) 260 300 - 4
Fax: (+856-31) 260 305

### Auto City Service Unit




Asean Road, Ban Nakham
P.O Box 6029, Vientiane Lao P.D.R
Phone: (+856-21) 520 702 - 4
Fax: (+856-21) 520 705

### Thakhek Business Unit




Thakhek business unit construction to be completed in 2011.

# ຜູ້ຖືຮຸ້ນ

| ລ/ດ | ຜູ້ຖືຮຸ້ນ | ເປີເຊັນການຖືຮຸ້ນ |
|---|---|---|
| 1 | ທ່ານ ໂອ ເຊ ຢັງ ປະທານທະນາຄານອິນໂດຈີນ | 43.52 % |
| 2 | ສະມາຄົມຊ່ວຍເຫຼືອລັດຖະກອນເກົາຫຼີ (POBA) | 19.47 % |
| 3 | ສະມາຄົມນັກຮົບເກົ່າເກົາຫຼີ (MMAA) | 19.47 % |
| 4 | ທ່ານນາງ ຖາວອນ ວົງສົມບັດ | 17.54 % |
| | TOTAL SHARE : | 100.00% |

Pie Chart Index 1



## ສະພາບໍລິຫານ



Mr. Oh Sei Young
ປະທານສະພາບໍລິຫານ



Mr. Kim Myung Kwan
ຮອງປະທານສະພາບໍລິຫານ



Ms. Chanpheng VONGSOMBATH
ສະມາຊິກ



Mr. Tay Hong Heng
ສະມາຊິກ



Mr. Teo Kim Siong
ສະມາຊິກ



# ຂໍ້ຄວາມຈາກທ່ານປະທານ

ໃນປີ 2010, ເສດຖະກິດຂອງລາວສືບຕໍ່ຂະຫຍາຍຕົວຢ່າງເຂັ້ມແຂງ ເຖິງວ່າມີການຟື້ນຕົວຢ່າງຊ້າໆຈາກພາວະເສດຖະກິດທົດຖອຍໃນທົ່ວໂລກ. ຊັບພະຍາກອນທຳມະຊາດຍັງເປັນປັດໃຈຕົ້ນຕໍໃນການຂັບເຄື່ອນເສດຖະກິດຂອງລາວໃຫ້ມີການຂະຫຍາຍຕົວ. ໃນຂະນະທີ່ GDP ໄດ້ເພີ່ມຂຶ້ນ 7.5% ໃນປີ 2010, ອັດຕາເງິນເຟີ້ໄດ້ລຸດລົງເຖິງ 5.98% ໃນປີ 2010. ສິ່ງທ້າທາຍສຳລັບທະນາຄານກາງແມ່ນການຮັກສາສະຖຽນລະພາບຂອງເສດຖະກິດມະຫາພາກໃນຂະນະທີ່ມີການໃຝ່ຫາການຂະຫຍາຍຕົວ

ສຳລັບທະນາຄານອິນໂດຈີນ, ປີ 2010 ແມ່ນປີທີສອງຫຼັງຈາກທີ່ໄດ້ຮັບສ້າງຕັ້ງຂຶ້ນໃນທ້າຍປີ 2008. ທະນາຄານມີການຂະຫຍາຍຕົວຢ່າງເຂັ້ມແຂງຕໍ່ກັບຊັບສິນທັງໝົດຈາກ 52.59 ລ້ານໂດລາ (ໃນທ້າຍປີ 2009) ມາເປັນ 103.22 ລ້ານໂດລາ (ໃນທ້າຍປີ 2010) ເຊິ່ງເພີ່ມຂຶ້ນ 96.3%. ຄວບຄູ່ກັບການເພີ່ມຂຶ້ນນີ້, ຍອດເງິນຮັບຝາກທັງໝົດກໍໄດ້ເພີ່ມຂຶ້ນ 131.9% ຄືຈາກ 36.99 ລ້ານໂດລາ (ໃນທ້າຍປີ 2009) ມາເປັນ 85.8 ລ້ານໂດລາ (ໃນທ້າຍປີ 2010) ໃນຂະນະທີ່ເງິນໃຫ້ກູ້ຢືມເພີ່ມຂຶ້ນຈາກ 32.68 ລ້ານໂດລາ (ໃນທ້າຍປີ 2009) ມາເປັນ 53.5 ລ້ານໂດລາ ເຊິ່ງເພີ່ມຂຶ້ນ 63.8%.

ພວກເຮົາມີຄວາມມຸ່ງໝັ້ນທີ່ຈະສະໜອງສິ່ງທີ່ດີທີ່ສຸດໃຫ້ແກ່ລູກຄ້າຂອງພວກເຮົາ, ທະນາຄານອິນໂດຈີນຈະສືບຕໍ່ແນວຄວາມຄິດ "Extreme Banking" ກໍຄື: ຄ່າບໍລິການຕໍ່າສຸດ, ອັດຕາດອກເບ້ຍສູງສຸດ ແລະ ປອດໄພທີ່ສຸດໃຫ້ແກ່ບັນດາລູກຄ້າ. ນອກຈາກນັ້ນລູກຄ້າVIPຂອງພວກເຮົາຈະສືບຕໍ່ໄດ້ຮັບການເບິ່ງແຍງໃນລະດັບສູງສຸດ, ມີສ່ວນຫຼຸດ ແລະ ລາງວັນ ພຽງແຕ່ນຳໃຊ້ບັດພລີເມຍທີ່ສາຂາ ຫຼືຮ້ານຄ້າທີ່ເຂົ້າຮ່ວມກັບພວກເຮົາ. ເພື່ອເພີ່ມປະສິດຕິພາບໃນການໃຫ້ບໍລິການແກ່ລູກຄ້າຂອງພວກເຮົາ, ບັນດາຜະລິດຕະພັນໃໝ່ໆແມ່ນລຽງແຖວລໍຖ້າ. ຂະນະດຽວກັນການເພີ່ມ ATM, ສາຂາ ແລະ ໜ່ວຍບໍລິການກໍໄດ້ຖືກຂຶ້ນແຜນແລ້ວ. ນີ້ແມ່ນຄວາມຕັ້ງໃຈຂອງທະນາຄານອິນໂດຈີນທີ່ຈະຂະຫຍາຍວັດທະນະທຳການບໍລິການ ແລະ ຜະລິດຕະພັນທີ່ດີເລີດໃຫ້ແກ່ລູກຄ້າທັງໝົດໃນ ສປປລາວ.

ສຳລັບຄວາມສຳເລັດຂອງທະນາຄານອິນໂດຈີນ, ຂ້າພະເຈົ້າຂໍສະແດງຄວາມຂອບໃຈແກ່ບັນດາຜູ້ຖືຮຸ້ນ, ລູກຄ້າ ແລະ ຄູ່ຮ່ວມທຸລະກິດທັງຫຼາຍທີ່ໃຫ້ການສະໜັບສະໜູນໃນໄລຍະປີ 2010 ທີ່ຜ່ານມາ. ດ້ວຍຄວາມເຂົ້າໃຈ ແລະ ການສະໜັບສະໜູນຂອງບັນດາທ່ານ, ທະນາຄານອິນໂດຈີນຈຶ່ງສາມາດຂ້າມຜ່ານຄວາມທ້າທາຍຫຼາຍປະການ, ດັ່ງນັ້ນຜົນສຳເລັດໃນການເພີ່ມຂຶ້ນຂອງຊັບສິນທັງໝົດ, ເງິນຮັບຝາກ ແລະ ເງິນໃຫ້ກູ້ຢືມດັ່ງກ່າວ ຈຶ່ງຂໍມອບຜົນງານໃຫ້ແກ່ຄະນະບໍລິຫານ ແລະ ບັນດາພະນັກງານຂອງທະນາຄານອິນໂດຈີນທຸກຄົນສຳລັບການອຸທິດຕົນ ແລະ ເຮັດວຽກຢ່າງໜັກໃນການບໍລິການລູກຄ້າ, ຜູ້ຖືຮຸ້ນ ແລະ ຊຸມຊົນ, ກໍຄືການມີສ່ວນຮ່ວມໃນຄວາມຈະເລີນ ແລະ ເຕີບໃຫຍ່ຂອງທະນາຄານ.

Sei Young OH
Chairman



# ສະພາບເສດຖະກິດໂດຍລວມຂອງລາວ - 2010

ພາຍຫຼັງຊະລໍຕົວເລັກໜ້ອຍໃນຊ່ວງພາວະເສດຖະກິດທົດຖອຍໃນທົ່ວໂລກ, ເສດຖະກິດຂອງລາວຂະຫຍາຍຕົວເຖິງ 7.5% (2010), ເທົ່າກັບອັດຕາຂະຫຍາຍຕົວສະເລຍໃນຊວງປີ 2004-2008. ນີ້ແມ່ນໄລຍະເວລາຍາວນານຂອງການຂະຫຍາຍຕົວເຊິ່ງໄດ້ຮັບຜົນສະທ້ອນຫຼັກໆຈາກການລົງທຶນໃຫຍ່ໆຄືທາງດ້ານບໍ່ແຮ່ ແລະ ພະລັງງານ.

ພາກອຸດສາຫະກຳ ເຊິ່ງກວມເອົາໜຶ່ງສ່ວນສີ່ຂອງ GDP ທັງໝົດ, ເພີ່ມຂຶ້ນ 18.0% ໃນປີ 2010 ແລະ ມີສວນຫຼາຍທີ່ສຸດໃນການຂະຫຍາຍຕົວຂອງເສດຖະກິດ. ຜົນຜະລິດກະແສໄຟຟ້າຫຼາຍກວ່າເທົ່າໂຕແມ່ນໂຮງງານໄຟຟ້ານ້ຳເທີນ 2 ເຊິ່ງໃຫຍ່ທີ່ສຸດໃນປະເທດຄື 1,070 ລ້ານຫວັດ, ເລີ່ມຜະລິດເຕັມອັດຕາໄດ້ໃນເດືອນເມສາ. ບາງໂຮງງານໄຟຟ້າທີ່ນ້ອຍກວ່າເຊັ່ນ: ເຊເຊັດ 2 ແລະ ນ້ຳເລີກ 1 ແລະ 2, ກໍເລີ່ມຜະລິດກະແສໄຟຟ້າເຊັ່ນດຽວກັນ. ຜົນຜະລິດສວນໃຫຍ່ແມ່ນຖືກສົ່ງອອກໄປຂາຍໃຫ້ປະເທດໄທ.

ການຜະລິດທາງດ້ານບໍ່ແຮ່ເພີ່ມຂຶ້ນ 19.0% (2010), ເຊິ່ງຖືກກະຕຸ້ນໂດຍລາຄາໂລຫະໃນຕະຫຼາດໂລກທີ່ສູງຂຶ້ນ. ຜົນຜະລິດຂອງທອງແດງຈາກສອງບໍ່ແຮ່ໃຫຍ່ຄື ພູເບ້ຍ ແລະ ເຊໂປນ ເພີ່ມຂຶ້ນ 21.0% ຫຼື 147,500 ໂຕນ. ທອງຄຳ ເພີ່ມຂຶ້ນ 7.0% ຫຼື 173,000 ອອນ ແລະ ແຮ່ເງິນ ເພີ່ມຂຶ້ນ 13.5% ຫຼືປະມານ 500,000 ອອນ.

ເປີເຊັນການເຕີບໃຫຍ່ຂອງ GDP ລາວ




Sources : Lao Statistics Bureau; Asian Development Outlook database.

ເຖິງແມ່ນວ່າເສດຖະກິດຂອງລາວຈະຂະຫຍາຍຕົວ, ແຕ່ອັດຕາເງິນເຟີ້ກັບຮອນແຮງຂຶ້ນຮອດລະດັບ 5.98% ໃນປີ 2010. ເພື່ອເປັນການຕານທານແຮງກົດດັນຈາກເງິນເຟີ້, ທະນາຄານກາງໄດ້ວາງອັດຕາດອກເບ້ຍຈາກ4%ເປັນ5% ສຳລັບເງິນໃຫ້ກູ້ຢືມທີ່ຕ່ຳກວາ1ອາທິດໃນເດືອນ ກັນຍາ ປີ 2010. ພ້ອມກັນນັ້ນທະນາຄານກາງຍັງວາງອັດຕາແລກປ່ຽນເພື່ອຮັບມືກັບເງິນເຟີ້, ເປົ້າໝາຍເພື່ອຈຳກັດການເພັ່ງຕົ່ງຊອງເງິນກີບໃນລະດັບ 5% ຕໍ່ປີ ທຽບກັບສະກຸນເງິນໃຫຍ່ໆ. ປີ2010 ເງິນກີບເພີ່ມຂຶ້ນທຽບໃສ່ເງິນໂດລາ 3% ແຕຫຼຸດລົງ 5% ທຽບໃສ່ເງິນບາດ (ເຮົານຳເຂົ້າສິນຄາຈາກປະເທດໄທເປັນຫຼັກ).

ຕົວຊີ້ວັດກະແສໄຟຟ້າ




Source : Ministry of Energy and Mines.

ເຖິງຢ່າງໃດກໍຕາມ, ແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ 7 ຂອງລັດຖະບານ (2011-2015) ແມ່ນເນັ້ນໜັກໃສ່ການຂະຫຍາຍຕົວ, ມີເປົ້າໝາຍສາງGDPສະເລຍປະຈຳປີໃຫ້ໄດ້ 8% ແລະ ເຮັດໃຫ້ປະເທດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020.

Sources Link:

1) http://www.adb.org/documents/books/ado/2011/ado2011-lao.pdf

2) http://www.bol.gov.la/english/index4.php

# ຈຸດເດັ່ນທາງດ້ານການເງິນ 2009 - 2010

### ເງິນຮັບຝາກແຍກຕາມສະກຸນເງິນ




### ເງິນຮັບຝາກແຍກຕາມປະເພດການຝາກ



# ຈຸດເດັ່ນທາງດ້ານການເງິນ 2009 - 2010

## ເງິນໃຫ້ກູ້ຢືມແກ່ລູກຄ້າ







## ຊັບສິນ ແລະ ທຶນທັງໝົດ



INDOCHINA BANK

# ບົດລາຍງານຖານະການເງິນ

## ທະນາຄານອິນໂດຈີນ
## ໃບສະຫຼຸບຊັບສິນບັດ
## ໃນວັນທີ 31 ທັນວາ 2010

| | Note | 2010 LAK | 2009 LAK |
|---|---|---|---|
| **ຊັບສິນ** | | | |
| ເງິນສົດໃນຄັງ | 3 | 11,855,093,554 | 21,813,570,470 |
| ເງິນຝາກກູນຳທະນາຄານອື່ນ | 4 | 239,190,096,11 | 842,241,257,991 |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | 5 | 427,951,046,876 | 277,263,148,712 |
| ຊັບສິນອື່ນໆ | 6 | 55,623,903,847 | 57,479,873,773 |
| ເງິນຝາກພາກບັງຄັບ | 7 | 67,997,981,335 | 22,803,078,374 |
| ລາຍຈ່າຍກ່ອນການສ້າງຕັ້ງ | 8 | - | 1,889,569,934 |
| ຊັບສິນບັດຄົງທີ່ມີຕົວຕົນ | 9 | 24,601,174,564 | 19,095,700,252 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 10 | 2,799,331,073 | 3,536,327,893 |
| **ລວມຍອດຊັບສິນ** | | 830,018,627,367 | 446,122,527,399 |
| **ໜີ້ສິນ** | | | |
| ເງິນຮັບຝາກຈາກລູກຄ້າ | 11 | 676,120,957,794 | 313,802,738,937 |
| ໜີ້ສິນອື່ນໆ | 12 | 21,329,048,160 | 12,639,290,255 |
| **ລວມຍອດໜີ້ສິນ** | | 697,450,005,954 | 326,442,029,193 |
| **ທຶນ** | | | |
| ທຶນຈົດທະບຽນ | 13 | 144,059,150,000 | 130,866,201,148 |
| ຄັງຈາກການແລກປ່ຽນເງິນຕາຕ່າງປະເທດ | | 3,807,051,148 | - |
| ກຳໄລ/(ຂາດທຶນ)ສະສົມ | | (15,297,579,735) | (11,185,702,941) |
| **ລວມຍອດທຶນ** | | 132,568,621,413 | 119,680,498,207 |
| **ລວມຍອດໜີ້ສິນ ແລະ ທຶນ** | | 830,018,627,367 | 446,122,527,399 |

ເອກະສານປະກອບແມ່ນພາກສ່ວນໜຶ່ງຂອງບົດລາຍງານຖານະການເງິນສະບັບນີ້.

# ບົດລາຍງານຖານະການເງິນ

## ທະນາຄານອິນໂດຈີນ
## ໃບລາຍງານຜົນໄດ້ຮັບ
## ສໍາລັບທ້າຍປີ ວັນທີ 31 ທັນວາ 2010

| | Note | 2010<br>LAK | 2009<br>LAK |
|---|---|---|---|
| ລາຍຮັບດອກເບ້ຍ | 14 | 40,405,501,641 | 15,409,633,711 |
| ລາຍຈ່າຍດອກເບ້ຍ | 15 | (23,242,099,043) | (9,012,659,573) |
| ລາຍຮັບຈາກດອກເບ້ຍສຸດທິ | | 17,163,402,598 | 6,396,974,138 |
| ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການສຸດທິ | 16 | 3,010,407,622 | 1,931,518,559 |
| ລາຍຈ່າຍບໍລິຫານ ແລະ ລາຍຈ່າຍທົ່ວໄປ | 17 | (19,374,448,731) | (15,814,206,278) |
| ຄ່າເຊື່ອມຂອງເງິນກູ້ຢືມປົກກະຕິ | 5 | (813,038,023) | (1,375,851,041) |
| ກໍາໄລ/(ຂາດທຶນ)ຈາກການແລກປ່ຽນເງິນຕາສຸດທິ | | (3,648,967,607) | 138,144,592 |
| ຂາດທຶນກ່ອນຫັກອາກອນ | | (3,662,644,141) | (8,723,420,030) |
| ອາກອນຕໍ່າສຸດ | 18 | (449,232,653) | (174,322,470) |
| ຜົນໄດ້ຮັບສຸດທິປະຈໍາປີ | | (4,111,876,794) | (8,897,742,500) |

ເອກະສານປະກອບແມ່ນພາກສ່ວນໜຶ່ງຂອງບົດລາຍງານຖານະການເງິນສະບັບນີ້.

# ບົດລາຍງານຖານະການເງິນ

## ທະນາຄານອິນໂດຈີນ
## ໃບລາຍງານການປ່ຽນແປງຂອງທຶນ
## ສຳລັບທ້າຍປີ ວັນທີ 31 ທັນວາ 2010

| | ທຶນຈົດທະບຽນ | ຄັງຈາກການແລກປ່ຽນເງິນຕາຕ່າງປະເທດ | ກຳໄລ/(ຂາດທຶນ) ສະສົມ | ລວມທັງໝົດ |
|---|---|---|---|---|
| | LAK | LAK | LAK | LAK |
| ວັນທີ 01 ມັງກອນ 2009 | 130,866,201,148 | - | (2,287,960,441) | 128,578,240,707 |
| ຜົນໄດ້ຮັບສຸດທິປະຈຳປີ | - | - | (8,897,742,500) | (8,897,742,500) |
| **ຍອດເຫຼືອທ້າຍ ວັນທີ 31 ທັນວາ 2009** | **130,866,201,148** | **-** | **(11,185,702,941)** | **119,680,498,207** |
| ການແລກປ່ຽນເງິນຕາຕ່າງປະເທດ | (3,807,051,148) | 3,807,051,148 | - | - |
| ການເພີ່ມທຶນພາຍໃນປີ | 17,000,000,000 | - | - | 17,000,000,000 |
| ຜົນໄດ້ຮັບສຸດທິປະຈຳປີ | - | - | (4,111,876,794) | (4,111,876,794) |
| **ຍອດເຫຼືອທ້າຍ ວັນທີ 31 ທັນວາ 2010** | **144,059,150,000** | **3.807,051,148** | **(15,297,579,735)** | **132,568,621,413** |

*The accompanying notes form an integral part of these financial statements.*

# ບົດລາຍງານຖານະການເງິນ

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 1. ໂຄງສ້າງ ແລະ ກິດຈະກຳຫຼັກ

ທະນາຄານອິນໂດຈີນ ຖືກສ້າງຕັ້ງຂຶ້ນໃນ ສ.ປ.ປ.ລາວ ໃນວັນທີ 26 ພຶດສະພາ 2008 ໂດຍໄດ້ຮັບ ໃບອະນຸຍາດລົງທຶນຕ່າງປະເທດ ເລກທີ 070 – 08/ຜທ, ແລະ ໃບອະນຸຍາດສ້າງຕັ້ງ ເລກທີ 53/ ທຫລ ຈາກ ທະນາຄານແຫ່ງ ສ.ປ.ປລາວ ໃນວັນທີ 28 ພະຈິກ 2008. ກິດຈະກຳຫຼັກ ແມ່ນການໃຫ້ບໍລິການທາງດ້ານທະນາຄານ ແລະ ການເງິນ. ທະນາຄານອິນໂດຈີນ ແມ່ນເລີ່ມເປີດບໍລິການວັນທີ 08 ທັນວາ 2008.

ຜູ້ຖືຮຸ້ນຄົນຕ່າງປະເທດປະກອບດ້ວຍ ທ່ານ ເຊຢັງໂອ 43.52%, ສະມາຄົມນັກຮົບເກົ່າເກົາຫຼີ 19.47%, ສະມາຄົມຊ່ວຍເຫຼືອລັດຖະກອນເກົາຫຼີ 19.47% ແລະ ທ່ານ ນາງ ຖາວອນ ວົງສົມບັດ 17.54% (ຄົນລາວ).

ບົດລາຍງານຖານະການເງິນຊ່ວຍຜູ້ບໍລິຫານໃນການປະເມີນຄວາມເປັນໄປໄດ້ທີ່ກະທົບຕໍ່ການດຳເນີນງານ ແລະ ຖານະການເງິນຂອງທະນາຄານໃນສະພາບເງື່ອນໄຂທີ່ບໍ່ແນ່ນອນທາງເສດຖະກິດໃນປະຈຸບັນຂອງລາວ ແລະ ວິກິດການທາງການເງິນທົ່ວໂລກ. ຜົນທີ່ໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການປະເມີນຜົນຂອງຜູ້ບໍລິຫານ ເຊິ່ງຄວາມແຕກຕ່າງນັ້ນອາດຈະເປັນຜົນກະທົບອັນໃຫຍ່ຫຼວງ.

ອີກດ້ານໜຶ່ງ, ການດັດແກ້ບັນຊີສຳລັບບົດລາຍງານຖານະການເງິນສະບັບນີ້ອາດມີຍ້ອນຜົນກະທົບຈາກສະພາບເງື່ອນໄຂທີ່ບໍ່ແນ່ນອນທາງເສດຖະກິດໃນອະນາຄົດດັ່ງທີ່ກ່າວມາແລ້ວນັ້ນລວມໄປເຖິງການເຂົ້າຫາຂໍ້ມູນທາງການເງິນທີ່ກ່ຽວຂ້ອງກັບລູກຄ້າ, ຜູ້ສະໜອງ, ຜູ້ສະໜັບສະໜູນການເງິນອື່ນໆ ແລະ ໜີ້ສິນອື່ນໆທີ່ສືບຕໍ່ຕິດພັນກັບການດຳເນີນທຸລະກິດຂອງທະນາຄານເຊິ່ງປະຈຸບັນຍັງບໍ່ທັນປະກົດອອກມາເທື່ອ.

ດັ່ງນັ້ນ, ບົດລາຍງານຖານະການເງິນອາດຈະບໍ່ສາມາດລວບລວມເອົາທັງໝົດຂອງການດັດແກ້ບັນຊີ ເຊິ່ງເປັນຜົນມາຈາກສະພາບເງື່ອນໄຂທີ່ບໍ່ແນ່ນອນທາງດ້ານເສດຖະກິດ.

ປະຈຸບັນທະນາຄານມີພະນັກງານທັງໝົດ 84 ຄົນ ໃນປີ 2010 (ມີ 60 ຄົນ ປີ 2009).

# ບົດລາຍງານຖານະການເງິນ

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 2. ລະບຽບການບັນຊີທີ່ສຳຄັນ

ບັນດາລະບຽບການທາງບັນຊີທີ່ສຳຄັນດັ່ງຕໍ່ໄປນີ້ແມ່ນຖືກນຳໃຊ້ໃນການສ້າງບົດລາຍງານຖານະການເງິນຂອງທະນາຄານ:

### (a) ພື້ນຖານຂອງຫຼັກການບັນຊີ

ບົດລາຍງານຖານະການເງິນ ແມ່ນຖືກສ້າງຂື້ນບົນພື້ນຖານຫຼັກການທາງບັນຊີທີ່ຍອມຮັບໄດ້ທົ່ວໄປຂອງ ສ.ປ.ປ ລາວ ເຊິ່ງຖືກນຳໃຊ້, ສົມທົບລະບຽບຫຼັກການຂອງ ທ.ຫ.ລ ເຊັ່ນ: ການຫັກຄ່າເຊື່ອມສຳລັບເງິນໃຫ້ກູ້ຢືມປົກກະຕິ ແລະ ຕ່ຳກວ່າມາດຕະຖານ, ລວມທັງການຕັ້ງຄັງສຳຮອງຕາມກົດໝາຍ. ບົດລາຍງານຖານະການເງິນບໍ່ມີຈຸດປະສົງສ້າງຂື້ນໂດຍອີງຕາມຫຼັກການທາງບັນຊີ ຫຼື ກົດລະບຽບທີ່ຢູ່ນອກເໜືອ ສ.ປ.ປ.ລາວ.

### (b) ສະກຸນເງິນທີ່ນຳໃຊ້ໃນການສ້າງບົດລາຍງານ

ສະກຸນເງິນປະຈຳຊາດຂອງ ສ.ປ.ປລາວ ແມ່ນເງິນກີບລາວ "ເງິນກີບ" ແລະ ຄະນະບໍລິຫານຂອງທະນາຄານໄດ້ນຳໃຊ້ເງິນກີບສຳລັບການສາງບົດລາຍງານ.

ສຳລັບການບັນທຶກການເຄື່ອນໄຫວບັນຊີ ແມ່ນອີງຕາມແຕ່ລະສະກຸນເງິນທີ່ມີການເຄື່ອນໄຫວຕົວຈິງ. ອັດຕາແລກປ່ຽນເພື່ອຫຼຸບເທົ່າເງິນກີບແມ່ນຖືກກຳນົດໂດຍ ທຫລ. ໃນໃບະສະຫຼຸບຊັບສິນບັດຢູ່ເບື້ອງ ຊັບສິນ ແລະ ໜີ້ສິນແມ່ນຖືກຫຼຸບເທົ່າເງິນກີບໂດຍນຳໃຊ້ອັດຕາແລກປ່ຽນດັ່ງກາວ. ກຳໄລ ແລະ ຂາດທຶນຈາກການແລກປ່ຽນເງິນຕາທັງມີຕົວຕົນ ແລະ ບໍ່ມີຕົວຕົນລ້ວນແລ້ວແຕ່ຖືກບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ.

ອັດຕາແລກປ່ຽນທີ່ຖືກນຳໃຊ້ໃນການຫຼຸບເທົ່າເງິນກີບຂອງສະກຸນເງິນໂດລາ ແລະ ເງິນບາດໃນມື້ປິດບັນຊີວັນທີ 31 ທັນວາ 2010 ແມ່ນ 8,041.51 ແລະ 267.14 ຕາມລຳດັບ.

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 2. ລະບຽບການບັນຊີທີ່ສຳຄັນ (ຕໍ່)

**(c) ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ**
ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າແມ່ນຖືກສະແດງອອກດ້ວຍຈຳນວນສຸດທິຄື: ຈຳນວນເງິນຕົ້ນລົບອອກຄ່າເຊື່ອມຂອງເງິນໃຫ້ກູ້ຢືມດັ່ງກ່າວ.

ເງິນໃຫ້ກູ້ຢືມຈະຖືກລ້າງອອກໄປຢູ່ນອກຜັງເມື່ອບໍ່ສາມາດເກັບກູ້ໄດ້ເລີຍເມື່ອມີການເກັບກູ້ຄືນໄດ້ແມ່ນຈະຖືກບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ.

**(d) ການຫັກຄ່າເຊື່ອມສຳລັບໜີ້ທວງຍາກ ແລະ ໜີ້ເສຍຂອງເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ**
ອີງຕາມລະບຽບການຂອງ ທຫລ ໄດ້ລະບຸການຫັກຄ່າເຊື່ອມແບບສະເພາະສຳລັບເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າທີ່ຖືວ່າເປັນໜີ້ທີ່ບໍ່ກໍ່ໃຫ້ເກີດລາຍໄດ້ຄືດັ່ງລຸ່ມນີ້:

| ຈັດຊັ້ນໜີ້ | ຈຳນວນມື້ທີ່ເກີນກຳນົດ | ການຫັກຄ່າເຊື່ອມ |
|---|---|---|
| ຕ່ຳກວ່າມາດຕະຖານ | 91 ຫາ 180 ມື້ | 20% |
| ຕ້ອງສົງໄສ | 181 ຫາ 360 ມື້ | 50% |
| ໜີ້ເສຍ | ກາຍ 360 ມື້ຂຶ້ນໄປ | 100% |

ນອກຈາກນັ້ນ, ການຫັກຄ່າເຊື່ອມປົກກະຕິແມ່ນ 0.5% ຂອງຍອດເຫຼືອຂອງເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ປົກກະຕິ (ຫຼັງຫັກໜີ້ທີ່ບໍ່ກໍ່ໃຫ້ເກີດລາຍໄດ້) ສຳລັບທະນາຄານເພື່ອຄວາມສ່ຽງໄພທີ່ບໍ່ອາດລະບຸໄດ້ເທື່ອ.

ການເກັບກູ້ຄືນຂອງເງິນໃຫ້ກູ້ຢືມທີ່ຖືກລ້າງອອກໄປນອກຜັງແລ້ວແມ່ນໄດ້ຖືກນຳໄປຫຼຸດຜ່ອນຄ່າເຊື່ອມຂອງເງິນໃຫ້ກູ້ຢືມໃນໃບລາຍງານຜົນໄດ້ຮັບ.

ເງິນໃຫ້ກູ້ຢືມທີ່ບໍ່ສາມາດເກັບກູ້ໜີ້ໄດ້ ຫຼື ເງິນໃຫ້ກູ້ຢືມທີ່ຖືກຈັດຊັ້ນເປັນໜີ້ເສຍຈະຖືກລ້າງອອກຫຼັງຈາກທີ່ພິຈາລະນາເຖິງມູນຄ່າຂອງຫຼັກຊັບຄ້ຳປະກັນ(ຖ້າມີ) ເມື່ອຄະນະຜູ້ບໍລິຫານມີຄວາມເຫັນວ່າຈະບໍ່ສາມາດເກັບກູ້ໜີ້ ໄດ້ແລ້ວ.

**(e) ເງິນຝາກນຳທະນາຄານອື່ນ**
ເງິນຝາກນຳທະນາຄານອື່ນ ແມ່ນມີພຽງເງິນຕົ້ນ.

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສໍາລັບທ້າຍປີ ວັນທີ 31 ທັນວາ 2010**

## 2. ລະບຽບການບັນຊີທີ່ສໍາຄັນ (ຕໍ່)

**(f) ລາຍຈ່າຍກ່ອນການສ້າງຕັ້ງ**

ລາຍຈ່າຍກ່ອນການສ້າງຕັ້ງ ແມ່ນລາຍຈ່າຍທີ່ກ່ຽວຂ້ອງກັບໃນການສ້າງຕັ້ງທະນາຄານ ເຊິ່ງເກີດຂຶ້ນກ່ອນການດໍາເນີນງານ ແລະ ຕ້ອງຫັກຄ່າເຊື່ອມ 2 ປີ.

**(g) ຊັບສິນບັດຄົງທີ່**

(i) ບັນດາລາຍການຊັບສິນບັດຄົງທີ່ ແມ່ນຖືກສະແດງດ້ວຍມູນຄ່າສຸດທິຄື: ມູນຄ່າເດີມຫັກອອກຄ່າຫຼຸ້ຍຫ້ຽນສະສົມ. ເມື່ອມີລາຍການຊັບສິນບັດຄົງທີ່ທີ່ມີອາຍຸການນໍາໃຊ້ແຕກຕ່າງກັນຫຼາຍຈະຖືກແຍກອອກເປັນລາຍການໜຶ່ງຕ່າງຫາກ.

(ii) ຄ່າຫຼຸ້ຍຫ້ຽນຊັບສິນບັດຄົງທີ່ແມ່ນຄິດໄລ່ແບບສະເໝີໂຕເມື່ອຫັກອອກຈາກມູນຄ່າເດີມຈົນເຫຼືອແຕ່ຄ່າຊາກຕາມອັດຕາຄ່າຫຼຸ້ຍຫ້ຽນຄືດັ່ງລຸ່ມນີ້:

| | |
|---|---|
| ການປັບປຸງສິ່ງປູກສ້າງ | 10% |
| ອຸປະກອນຫ້ອງການ | 10% |
| ເຄື່ອງຕົບແຕ່ງ | 10% |
| ພາຫານະ | 20% |
| Software | 20% |

(iii) ລາຍຈ່າຍທີ່ກ່ຽວຂ້ອງກັບລາຍການຊັບສິນບັດຄົງທີ່ພາຍຫຼັງທີ່ຖືກຈົດບັນທຶກຊັບສິນແລ້ວແມ່ນຖືວ່າເປັນລາຍຈ່າຍຕາມປົກກະຕິຕາມເວລາທີ່ເກີດຂຶ້ນຕົວຈິງ.

**(h) ຄ່າເຊື່ອມ**

ຄ່າເຊື່ອມແມ່ນເກີດຂຶ້ນເມື່ອທະນາຄານມີພັນທະຕາມກົດໝາຍ ຫຼື ຕາມລະບຽບການ ເຊິ່ງມັນຮຽກຮ້ອງໃຫ້ຕ້ອງນໍາໃຊ້ຊັບພະຍາກອນໃນການຊໍາລະສະສາງ ແລະ ມູນຄ່າດັ່ງກ່າວແມ່ນຖືກຄາດຄະເນໄວ້ຮຽບຮ້ອຍແລ້ວ.

.

# ບົດລາຍງານຖານະການເງິນ

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 2. ລະບຽບການບັນຊີທີ່ສຳຄັນ (ຕໍ່)

**(i) ເງິນຝາກ**

ເງິນຝາກຈາກລູກຄ້າໝາຍເຖິງ ຈຳນວນເງິນທີ່ໄດ້ຮັບຝາກ ແລະ ສ່ວນເພີ່ມດອກເບ້ຍໃຫ້ລູກຄ້າທີ່ບັນທຶກໃນແຕ່ລະມື້.

**(j) ການຮັບຮູ້ລາຍຮັບ**

ດອກເບ້ຍເຊິ່ງໄດ້ຮັບຈາກການລົງທຶນໃນຫຼັກຊັບແມ່ນຖືວ່າເປັນລາຍຮັບດອກເບ້ຍໂດຍອີງຕາມອາຍຸຂອງຫຼັກຊັບດັ່ງກ່າວ. ລາຍຮັບຈາກບັນດາທຸລະກຳຂອງທະນາຄານແມ່ນຖືກບັນທຶກໂດຍມີພື້ນຖານຄືດັ່ງລຸ່ມນີ້:

(i) ຄ່າບໍລິການ ແລະ ຄ່າທຳນຽມທີ່ກ່ຽວຂ້ອງກັບເງິນໃຫ້ກູ້ຢືມແກ່ລູກຄ້າແມ່ນຈະຖືກບັນທຶກໃນເວລາທີ່ເກີດ ມີການບໍລິການນັ້ນໆ;

(ii) ຄ່າທຳນຽມຂອງການຄ້ຳປະກັນ ແລະ ເຮັດຂໍ້ຜູກພັນໃຫ້ແກ່ລູກຄ້າ ແມ່ນຈະຖືກບັບທຶກລາຍຮັບຕາມໄລຍະເວລາທີ່ໃຫ້ບໍລິການແກ່ລູກຄ້າ;

(iii) ຄ່າບໍລິການ ແລະ ຄ່າທຳນຽມອື່ນໆ.ແມ່ນຈະຖືກບັນທຶກໃນເວລາທີ່ໃຫ້ບໍລິການແກ່ລູກຄ້າ.

ລາຍຮັບດອກເບ້ຍແມ່ນຖືກບັນທຶກປະຈຳວັນໃນຮູບແບບການຕັ້ງໜີ້ຕ້ອງຮັບຍົກເວັ້ນສ່ວນທີ່ກ່ຽວຂ້ອງກັບບັນຊີທີ່ບໍ່ກໍ່ໃຫ້ເກີດລາຍໄດ້. ເມື່ອມີບັນຊີກາຍເປັນບັນຊີທີ່ບໍ່ກໍ່ໃຫ້ເກີດລາຍໄດ້ການບັນທຶກລາຍຮັບຈາກດອກເບ້ຍແມ່ນຈະຖືກຍຸດຕິກ່ອນຈົນກວ່າມີການຊຳລະສະສາງຕົວຈິງ. ບັນຊີລູກຄ້າທີ່ຖືວ່າເປັນບັນຊີບໍ່ກໍ່ໃຫ້ເກີດລາຍໄດ້ກໍ່ຕໍ່ເມື່ອບໍ່ສາມາດຊຳລະຕາມກຳນົດເກີນ 3 ເດືອນ (ອີງຕາມລະບຽບການຈັດຊັ້ນໜີ້ຂອງ ທຫລ).

**(k) ລາຍຈ່າຍດອກເບ້ຍ**

ລາຍຈ່າຍດອກເບ້ຍຂອງເງິນຮັບຝາກ ແລະ ເງິນທີ່ກູ້ຢືມມາແມ່ນຖືກບັນທຶກ ແລະ ຕັ້ງໜີ້ຕ້ອງຈ່າຍແບບປະຈຳວັນ

**(l) ອາກອນລາຍໄດ້**

ອາກອນທີ່ໄດ້ຈາກຜົນກຳໄລ ຫຼື ຂາດທຶນພາຍໃນປີ ແມ່ນອາກອນປະຈຳປີ

ອາກອນປະຈຳປີ ແມ່ນຈຳນວນຄາດຄະເນອາກອນຕ້ອງສົ່ງ ເຊິ່ງໄດ້ຈາກລາຍໄດ້ທີ່ຖືກຫັກອາກອນຄູນກັບອັດຕາອາກອນຂອງມື້ເຮັດໃບສະຫຼຸບຊັບສິນບັດ. ພັນທະອາກອນແມ່ນອາກອນກຳໄລປະຈຳປີ ຫຼື ອາກອນຕ່ຳສຸດ ເຊິ່ງໄດ້ຈາກຍອດລວມລາຍຮັບ (ໃນກໍລະນີຂາດທຶນ) ອີງຕາກົດໝາຍສວຍສາອາກອນຂອງ ສປປ ລາວ

**(m) ການເຊົ່າສຳລັບການດຳເນີນງານ**

ການເຊົ່າເຊິ່ງມີຄວາມສ່ຽງ ແລະ ຜົນຕອບແທນໃນສັດສ່ວນທີ່ຫຼາຍຂອງຜູ້ເປັນເຈົ້າຂອງ ເຊິ່ງຕົກເປັນຄວາມ ຮັບຊອບຂອງຜູ້ໃຫ້ເຊົ່າຈະຖືກຈັດເປັນການເຊົ່າສຳລັບການດຳເນີນງານ. ການຈ່າຍເງິນສຳລັບຄ່າເຊົ່າແມ່ນບັນ ທຶກເຂົ້າໃນໃບລາຍງານຜົນໄດ້ຮັບໃນການຫັກຮູບແບບສະເໝີໂຕໂດຍອີງຕາມອາຍຸການຂອງການເຊົ່າ

**(n) ພາກສ່ວນໃນເຄືອ**

ພາກສ່ວນທີ່ຈະຖືກຮຽກວ່າພາກສ່ວນໃນເຄືອແມ່ນຝ່າຍໃດຝ່າຍໜຶ່ງທີ່ມີຄວາມສາມາດໃນການຄວບຄຸມ ຫຼື ອຳນາດສ່ວນໃຫຍ່ຂອງອີກຝ່າຍບໍ່ວ່າໂດຍທາງກົງ ຫຼື ທາງອ້ອມ ໃນການສ້າງຜົນປະໂຫຍດທາງການເງິນ ແລະ ການຕັດສິນໃຈໃນການດຳເນີນງານລວມທັງເມື່ອທະນາຄານ ຫຼື ອີກຝ່າຍແມ່ນຖືກກຳນົດໃຫ້ຄວບຄຸມ ຫຼື ກຳອຳນາດສ່ວນໃຫຍ່ກໍ່ຕາມ. ພາກສ່ວນໃນເຄືອອາດຈະເປັນບຸກຄົນ ຫຼື ນິຕິບຸກຄົນ ແລະ ລວມທັງຜູ້ໃກ້ຊິດບຸກຄົນໃນຄອບຄົວ

# ບົດລາຍງານຖານະການເງິນ

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 3. ເງິນສົດໃນຄັງ

| | 2010 LAK | 2009 LAK |
|---|---|---|
| ເງິນກີບ | 3,834,252,500 | 3,302,565,500 |
| ເງິນໂດລາ | 4,921,331,746 | 15,151,962,283 |
| ເງິນບາດ | 3,092,362,418 | 3,358,504,907 |
| ເງິນຢູໂຣ | 7,146,890 | 537,780 |
| | 11,855,093,554 | 21,813,570,470 |

## 4 . ເງິນຝາກນຳທະນາຄານອື່ນ

| | 2010 LAK | 2009 LAK |
|---|---|---|
| **ພາຍໃນປະເທດ:** | | |
| ທະນາຄານແຫ່ງ ສປປລາວ | 83,114,387,228 | 29,024,972,385 |
| ທະນາຄານການຄ້າຕ່າງປະເທດ | 823,027,964 | 2,992,909,608 |
| ທະນາຄານຮ່ວມພັດທະນາ | 390,153,399 | 123,633,902 |
| **ຕ່າງປະເທດ:** | | |
| ທະນາຄານສະແຕນດາດຊັດເຕີ້, ນີວຢອກ | 145,865,411,634 | 4,932,587,773 |
| ທະນາຄານສະແຕນດາດຊັດເຕີ້, ກຸງເທບ | 4,394,021,417 | 3,385,565,433 |
| ທະນາຄານສະແຕນດາດຊັດເຕີ້, ເຢຍລະມັນ | 841,432,586 | 1,103,395,224 |
| ທະນາຄານດັດ, ນີວຢອກ | 3,761,661,890 | 678,193,666 |
| | 239,190,096,118 | 42,241,257,991 |

The above amounts are analysed as follows:

| | 2010 LAK | 2009 LAK |
|---|---|---|
| **a) ແຍກຈາມສະກຸນເງິນ:** | | |
| ເງິນກີບ | 83,214,529,299 | 12,211,292,040 |
| ເງິນໂດລາ | 150,418,188,914 | 18,106,556,926 |
| ເງິນບາດ | 4,715,945,318 | 10,820,013,801 |
| ເງິນຢູໂຣ | 841,432,587 | 1,103,395,224 |
| | 239,190,096,118 | 42,241,257,991 |

## ທະນາຄານອິນໂດຈີນ
## ເອກະສານປະກອບຂອງບົດລາຍງານຖານະການເງິນ
## ສຳລັບທ້າຍປີ ວັນທີ 31 ທັນວາ 2010

### 5. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ

| | 2010<br>LAK | 2009<br>LAK |
|---|---|---|
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | 430,101,554,892 | 278,642,570,564 |
| ຄາເຊື່ອມຂອງເງິນກູ້ຢືມປົກກະຕິ | (2,150,508,016) | (1,379,421,852) |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າສຸດທິ | 427,951,046,876 | 277,263,148,712 |

| a) ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າແຍກຕາມປະເພດຕ່າງໆ: | 2010<br>LAK | 2009<br>LAK |
|---|---|---|
| i) ແຍກຕາມຂະແໜງເສດຖະກິດ: | | |
| ອຸດສາຫະກຳ | 397,265,352 | 31,014,919 |
| ປະກອບວັດຖຸ-ເຕັກນິກ | 80,390,704,564 | 42,647,559,260 |
| ກະສິກຳ-ປ່າໄມ້ | 32,140,884,160 | 2,122,465,252 |
| ການຄ້າ | 11,596,098,826 | 11,883,252,902 |
| ຂົນສົ່ງ-ໄປສະນີ | 28,157,866,849 | 29,183,656,749 |
| ບໍລິການ | 38,010,345,432 | 17,023,054,132 |
| ອື່ນໆ | 239,408,389,709 | 175,751,567,350 |
| | 430,101,554,892 | 278,642,570,564 |
| ii) ແຍກຈາມສະກຸນເງິນ: | | |
| ເງິນກີບ | 85,252,622,906 | 39,690,278,802 |
| ເງິນໂດລາ | 279,918,807,164 | 199,527,077,437 |
| ເງິນບາດ | 64,930,124,822 | 39,425,214,325 |
| | 430,101,554,892 | 278,642,570,564 |
| iii) ແຍກຕາມພາກສ່ວນເສດຖະກິດ: | | |
| ອົງການຈັດຕັ້ງແຫງລັດ | 100,212,976 | 33,223,265 |
| ລັດວິສາຫະກິດ | 9,522,756 | - |
| ອົງການຈັດຕັ້ງເສດຖະກິດລວມໝູ່ | 176,600,003 | - |
| ວິສາຫະກິດເອກະຊົນ | 101,551,192,599 | 92,113,809,255 |
| ວິສາຫະກິດຕ່າງປະເທດ | 88,858,279,610 | 10,777,193,959 |
| ບຸກຄົນ (ຜູ້ທີ່ຕັ້ງຢູ່ລາວ) | 234,031,197,484 | 174,855,444,009 |
| ບຸກຄົນ (ຜູ້ທີ່ບໍ່ຕັ້ງຢູ່ລາວ) | 5,374,549,464 | 862,900,076 |
| | 430,101,554,892 | 278,642,570,564 |
| iv) ແຍກຕາມຄຸນນະພາບໜີ້: | | |
| ໜີ້ປົກກະຕິ | 430,101,554,892 | 278,642,570,564 |

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 5. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ (ຕໍ່)

| a) ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າແຍກຕາມປະເພດຕ່າງໆ: (ຕໍ່) | 2010 | 2009 |
|---|---|---|
| v) ແຍກຕາມອັດຕາດອກເບ້ຍ | | |
| ເງິນກີບ | 12.00% - 18.00% | 12.00% - 18.00% |
| ເງິນໂດລາ | 6.00% - 19.20% | 6.00% - 19.20% |
| ເງິນບາດ | 9.00% - 30.00% | 9.00% - 30.00% |

b) ການເຄື່ອນໄຫວຂອງການຫັກຄ່າເຊື່ອມເງິນໃຫ້ກູ້ຢືມມີດັ່ງນີ້:

| | 2010<br>LAK | 2009<br>LAK |
|---|---|---|
| ຍອດຍົກມາ | 1,379,421,852 | 3,570,811 |
| ຜົດດ່ຽງອັດຕາແລກປ່ຽນ | (41,951,859) | - |
| ຄ່າເຊື່ອມພາຍໃນປີ | 813,038,023 | 1,375,851,041 |
| **ຍອດເຫຼືອທ້າຍ** | 2,150,508,016 | 1,379,421,852 |

## 6. ຊັບສິນອື່ນໆ

| | 2010<br>LAK | 2009<br>LAK |
|---|---|---|
| ດອກເບ້ຍຄ້າງຮັບ | 2,410,709,403 | 1,828,074,871 |
| ໜີ້ຕ້ອງຮັບອື່ນໆ | - | 5,325,562 |
| ເງິນຄ້ຳປະກັນອາຄານ | 50,251,032,303 | 53,005,858,506 |
| ລາຍຈ່າຍລ່ວງໜ້າ | 1,628,438,911 | 1,301,214,428 |
| ລາຍຈ່າຍທີ່ຕ້ອງແບ່ງສ່ວນ | 1,333,723,230 | 1,339,400,407 |
| | 55,623,903,847 | 57,479,873,774 |

# ບົດລາຍງານຖານະການເງິນ

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 7. ເງິນຝາກພາກບັງຄັບ

| | 2010<br>LAK | 2009<br>LAK |
|---|---|---|
| ເງິນຝາກພາກບັງຄັບມີຄື: | | |
| ຄັງສຳຮອງພິເສດ | 17,000,000,000 | - |
| ເງິນຝາກພາກບັງຄັບຂອງລູກຄ້າ | 50,997,981,335 | 22,803,078,374 |
| | 67,997,981,335 | 22,803,078,374 |

ຄັງສຳຮອງພິເສດ ແມ່ນໄດ້ປະກົດຂຶ້ນໃນປີນີ້ ເຊິ່ງເປັນເງິນຝາກນຳ ທຫລ ເພື່ອຮັບໃຊ້ການເພີ່ມທຶນພາຍໃນປີໂດຍອີງຕາມແຈ້ງການເລກທີ 667, ລົງວັນທີ 03/07/2009. ທະນາຄານໄດ້ຮັບການຍົກເວັ້ນການຮັກສາ 25% ຂອງທຶນທັງໝົດຈາກ ທຫລ.

ຍອດເຫຼືອຂອງເງິນຝາກພາກບັງຄັບແມ່ນໄດ້ຈາກຍອດເງິນຝາກຂອງລູກຄ້າຄູນກັບອັດຕາສ່ວນເຊິ່ງຂຶ້ນກັບແຕ່ລະສະກຸນເງິນເຊັ່ນ 5% ສຳລັບເງິນກີບ, 10% ສຳລັບເງິນໂດລາ ແລະ ເງິນບາດ. ເງິນຝາກພາກບັງຂັບນີ້ ແມ່ນບໍ່ມີດອກເບ້ຍຮັບ.

## 8. ລາຍຈ່າຍກ່ອນການສ້າງຕັ້ງ

| | 2010<br>LAK | 2009<br>LAK |
|---|---|---|
| ມູນຄ່າເດີມ | | |
| ໃນວັນທີ 1 ມັງກອນ ແລະ 31 ທັນວາ | 4,122,698,015 | 4,122,698,015 |
| ຄ່າເຊື່ອມ | | |
| ຍອດຍົກມາ | 2,233,128,081 | 171,779,073 |
| ຜິດດ່ຽງອັດຕາແລກປ່ຽນ | 80,073,102 | - |
| ຄ່າເຊື່ອມພາຍໃນປີ | 1,809,496,832 | 2,061,349,008 |
| ຍອດເຫຼືອທ້າຍ | 4,122,698,015 | 2,233,128,081 |
| ມູນຄ່າສຸດທິ | - | 1,889,569,934 |

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 9. ຊັບສິນບັດຄົງທີ່ມີຕົວຕົນ

| | ການປັບປຸງສິ່ງປູກສ້າງ | ອຸປະກອນຫ້ອງການ | ພາຫານະ | ເຄື່ອງຕົບແຕ່ງ | ພວມຈັດຊື້ | ລວມ |
|---|---|---|---|---|---|---|
| ມູນຄ່າເດີມ | LAK | LAK | LAK | LAK | LAK | LAK |
| ໃນວັນທີ 1 ມັງກອນ 2010 | 13,853,081,680 | 4,297,687,456 | 1,399,399,600 | 1,490,406,005 | 562,979,085 | 21,603,553,826 |
| ສ່ວນເພີ່ມພາຍໃນປີ | | | | | 7,593,434,056 | 7,593,434,056 |
| ໂອນເຂົ້າເປັນ ຊຄທ | - | 2,569,342,860 | 258,953,460 | 259,377,360 | (3,087,673,680) | - |
| ສະສາງອອກຈາກ ຊຄທ | - | - | - | (53,584,839) | - | (53,584,839) |
| ໃນວັນທີ 31 ທັນວາ 2010 | 13,853,081,680 | 6,867,030,316 | 1,658,353,060 | 1,696,198,526 | 5,068,739,461 | 29,143,403,043 |
| **ລົບ: ຄ່າຫຼຸ້ຍຫ້ຽນສະສົມ ຊຄທ** | | | | | | |
| ໃນວັນທີ 1 ມັງກອນ 2010 | 1,498,949,753 | 152,885,037 | 168,576,014 | 687,442,770 | - | 2,507,853,574 |
| ສ່ວນເພີ່ມພາຍໃນປີ | 1,371,507,266 | 235,512,481 | 309,060,113 | 127,672,392 | - | 2,043,752,252 |
| ສະສາງອອກຈາກ ຊຄທ , | - | - | - | (9,377,347) | - | (9,377,347) |
| ຈັດປະເພດ ຊຄທ ຄືນໃໝ່ | - | 534,557,733 | - | (534,557,733) | - | |
| ໃນວັນທີ 31 ທັນວາ 2010 | 2,870,457,019 | 922,955,251 | 477,636,127 | 271,180,082 | - | 4,542,228,479 |
| **ມູນຄ່າສຸດທິ ໃນວັນທີ 31 ທັນວາ 2010** | 10,982,624,661 | 5,944,075,065 | 1,180,716,933 | 1,425,018,444 | 5,068,739,461 | 24,601,174,564 |
| **ມູນຄ່າສຸດທິ ໃນວັນທີ 31 ທັນວາ 2009** | 12,354,131,927 | 4,144,802,419 | 1,230,823,586 | 802,963,235 | 562,979,085 | 19,095,700,252 |

## ທະນາຄານອິນໂດຈີນ
## ເອກະສານປະກອບຂອງບົດລາຍງານຖານະການເງິນ
## ສຳລັບທ້າຍປີ ວັນທີ 31 ທັນວາ 2010

### 10. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

| | 2010<br>LAK | 2009<br>LAK |
|---|---|---|
| ມູນຄ່າເດີມ | | |
| ໃນວັນທີ 1 ມັງກອນ | 4,152,652,095 | 1,831,120,986 |
| ຜົດດ່ຽງອັດຕາແລກປ່ຽນ | - | - |
| ສ່ວນເພີ່ມພາຍໃນປີ | 68,483,160 | 2,364,146,459 |
| ສະສາງອອກ | - | (42,615,350) |
| ຍອດເຫຼືອທ້າຍ 31 ທັນວາ | 4,221,135,255 | 4,152,652,095 |
| ຄ່າເຊື່ອມ | | |
| ໃນວັນທີ 1 ມັງກອນ | 616,324,202 | 30,518,683 |
| ຜົດດ່ຽງອັດຕາແລກປ່ຽນ | - | - |
| ສ່ວນເພີ່ມພາຍໃນປີ | 805,479,980 | 590,067,054 |
| ສະສາງອອກ | - | (4,261,535) |
| ຍອດເຫຼືອທ້າຍ 31 ທັນວາ | 1,421,804,182 | 616,324,202 |
| ມູນຄ່າສຸດທິ | 2,799,331,073 | 3,536,327,893 |

### 11. ເງິນຮັບຝາກຈາກລູກຄ້າ

| | 2010<br>LAK | 2009<br>LAK |
|---|---|---|
| a) ແຍກຕາມປະເພດເງິນຝາກ: | | |
| ເງິນຝາກປະຫຍັດ | 199,125,800,183 | 63,307,176,629 |
| ເງິນຝາກກະແສລາຍວັນ | 33,186,063,302 | 17,119,178,440 |
| ເງິນຝາກມີກຳນົດ | 443,809,094,309 | 233,376,383,868 |
| | 676,120,957,794 | 313,802,738,937 |
| b) ແຍກຕາມສະກຸນເງິນ: | | |
| ເງິນກີບ | 100,197,250,274 | 47,247,279,961 |
| ເງິນໂດລາ | 495,936,102,344 | 219,647,913,110 |
| ເງິນບາດ | 79,987,605,176 | 46,907,545,866 |
| | 676,120,957,794 | 313,802,738,937 |

## ບົດລາຍງານຖານະການເງິນ

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສໍາລັບທ້າຍປີ ວັນທີ 31 ທັນວາ 2010**

### 11. ເງິນຮັບຝາກຈາກລູກຄ້າ (ຕໍ່)

| | | 2010<br>LAK | 2009<br>LAK |
|---|---|---|---|
| c) | ແຍກຕາມປະເພດລູກຄ້າ: | | |
| | ວິສາຫະກິດພາຍໃນ | 27,867,715,624 | 31,531,990,034 |
| | ວິສາຫະກິດຕ່າງປະເທດ | 172,063,562,399 | 12,721,147,705 |
| | ບຸກຄົນທົ່ວໄປ | 476,189,679,771 | 269,549,601,198 |
| | | 676,120,957,794 | 313,802,738,937 |
| e) | ແຍກຕາມອັດຕາດອກເບ້ຍ(ຕໍ່ປີ): | | |
| | ເງິນຝາກປະຫຍັດ | 1.75% - 3.5% | 2% - 5% |
| | ເງິນຝາກມີກໍານົດ | 2.75%-12% | 3%-14% |

### 12. ໜີ້ສິນອື່ນໆ

| | 2010<br>LAK | 2009<br>LAK |
|---|---|---|
| ດອກເບ້ຍຄ້າງຈ່າຍ | 13,564,589,363 | 5,660,294,675 |
| ໜີ້ຕ້ອງສົ່ງອື່ນໆ | 7,160,860,903 | 6,794,877,877 |
| ຈໍານວນເງິນອື່ນໆ ຕ້ອງຊໍາລະໃຫ້ລູກຄ້າ | 603,597,894 | 184,117,703 |
| | 21,329,048,160 | 12,639,290,255 |

### 13. ທຶນຈົດທະບຽນ

| | 2010<br>LAK | 2009<br>LAK |
|---|---|---|
| ຮຸ້ນຂອງທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ ແລະ ຖອກເຕັມແລ້ວໃນມູນຄ່າຮຸ້ນລະ 5ໂດລາ: | 144,059,150,000 | 130,866,210,148 |

ທະນາຄານອິນໂດຈີນມີທຶນຈົດທະບຽນທັງໝົດ 144ຕື້ກີບ (ປີ2009 ມີ:131ຕື້ກີບ) ອີງຕາມຂໍ້ກໍານົດຂອງ ທຫລ ທະນາຄານຕ້ອງເພີ່ມທຶນຈົດທະບຽນເປັນ 300ຕື້ກີບ ພາຍໃນປີ 2014 ເຊິ່ງການເພີ່ມທຶນດັ່ງກ່າວຕ້ອງມີການເພີ່ມຢ່າງໜ້ອຍ 10% ໃນແຕ່ລະປີເລີ່ມຈາກປີ 2010.

ສໍາລັບທ້າຍປີວັນທີ 31 ທັນວາ 2010 ອີງຕາມຂໍ້ກໍານົດຂອງ ທຫລ ທີ່ອອກໃນປີ 2010 ບັນດາທຶນຈົດທະບຽນທີ່ຍັງເປັນເງິນຕາຕ່າງປະເທດຕ້ອງຖືກຈົດເປັນເງິນກີບໂດຍອີງໃສ່ອັດຕາແລກປ່ຽນທົ່ວໄປຂອງກົມບໍລິການໃນວັນທີ 31 ມັງກອນ 2010 (ຄື 8,470.51) ແລະຖືກບັນທຶກເປັນກີບໄປເລີຍ. ທຶນຈົດທະບຽນທີ່ຮັບເພີ່ມພາຍຫຼັງ ວັນທີ 31 ມັງກອນ 2010 ແມ່ນຈະຖືກແລກປ່ຽນເປັນກີບໃນອັດຕາແລກປ່ຽນຂອງມື້ທີ່ມີລາຍການນັ້ນ.

# ບົດລາຍງານຖານະການເງິນ

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສໍາລັບທ້າຍປີ ວັນທີ 31 ທັນວາ 2010**

## 13. ທຶນຈົດທະບຽນ (ຕໍ່)

ການເຄື່ອນໄຫວຂອງຈໍານວນຮຸ້ນຂອງທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ ແລະ ຖອກເຕັມແລ້ວໃນມູນຄ່າຮຸ້ນລະ 5ໂດລາ ແມນຖືກສະແດງດັ່ງລຸມນີ້:

| | 2010<br>Unit | 2009<br>Unit |
|---|---|---|
| ຍອດຍົກມາວັນທີ 1 ມັງກອນ 2010 | 3,000,000 | 3,000,000 |
| ຈໍານວນຮຸ້ນທີ່ເພີ່ມພາຍໃນປີ | 421,000 | - |
| ຍອດເຫຼືອທ້າຍວັນທີ 31 ທັນວາ 2010 | 3,421,000 | 3,000,000 |

## 14. ລາຍຮັບດອກເບ້ຍ

| | 2010<br>LAK | 2009<br>LAK |
|---|---|---|
| ຈາກເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | 40,150,493,644 | 14,777,736,337 |
| ຈາກເງິນຝາກນໍາທະນາຄານອື່ນ | 11,546,000 | 26,174,744 |
| ຈາກສິນເຊື່ອລົດແກ່ພະນັກງານ ແລະ ບໍລິສັດໃນເຄືອ | 243,461,997 | 605,722,630 |
| | 40,405,501,641 | 15,409,633,711 |

## 15. ລາຍຈ່າຍດອກເບ້ຍ

| | 2010<br>LAK | 2009<br>LAK |
|---|---|---|
| ເງິນຝາກປະຫຍັດ | 2,134,321,239 | 809,375,344 |
| ເງິນຝາກມີກໍານົດ | 21,107,777,804 | 8,203,284,229 |
| | 23,242,099,043 | 9,012,659,573 |

## 16. ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການສຸດທິ

| | 2010<br>LAK | 2009<br>LAK |
|---|---|---|
| ລາຍຮັບຈາກຄ່າທໍານຽມ ແລະ ຄ່າບໍລິການ | 2,691,193,462 | 1,350,609,501 |
| ລາຍຈ່າຍຈາກຄ່າທໍານຽມ ແລະ ຄ່າບໍລິການ | (209,847,572) | (248,877,997) |
| ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການສຸດທິ | 2,481,345,890 | 1,101,731,504 |
| ລາຍຮັບຍ່ອຍໆ ອື່ນໆ | 529,061,732 | 829,787,055 |
| | 3,010,407,622 | 1,931,518,559 |

# ບົດລາຍງານຖານະການເງິນ

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 17. ລາຍຈ່າຍບໍລິຫານ ແລະ ລາຍຈ່າຍທົ່ວໄປ

| | 2010 LAK | 2009 LAK |
|---|---|---|
| ລາຍຈ່າຍທີ່ກ່ຽວກັບພະນັກງານ | 9,261,868,687 | 7,068,419,443 |
| ລາຍຈ່າຍຄ່າຫຼຸຍຫ້ຽນ | 2,849,232,232 | 2,917,871,556 |
| ລາຍຈ່າຍຄ່າເຊົ່າ | 580,156,372 | 268,273,232 |
| ລາຍຈ່າຍສຳລັບການບໍລິການຈາກພາຍນອກ | 1,010,338,841 | 929,437,268 |
| ລາຍຈ່າຍໃນການໂຄສະນາ/ການຕະຫຼາດ | 788,986,072 | 863,867,888 |
| ລາຍຈ່າຍສຳລັບເຄື່ອງໃຊ້ຫ້ອງການ | 381,948,897 | 714,465,101 |
| ລາຍຈ່າຍປະກັນໄພ | 598,002,464 | 210,154,242 |
| ຄ່າເຊື່ອມລາຍຈ່າຍກ່ອນການສ້າງຕັ້ງ | 1,809,496,832 | 2,061,349,008 |
| ລາຍຈ່າຍຍ່ອຍໆ ອື່ນໆ | 2,094,418,334 | 797,234,500 |
| | 19,374,448,731 | 15,814,206,278 |

## 18. ພັນທະອາກອນ

| | 2010 LAK | 2009 LAK |
|---|---|---|
| ຍອດຍົກມາ | 32,160,257 | - |
| ອາກອນທຸລະກິດທີ່ຕ້ອງຈ່າຍພາຍໃນປີ | 449,232,653 | 174,322,490 |
| ອາກອນຈ່າຍແລ້ວພາຍໃນປີ | (347,871,338) | (142,162,233) |
| ຍອດເຫຼືອທ້າຍ (ຄ້າງຈ່າຍ) | 133,521,572 | 32,160,257 |

ອີງຕາມກົດໝາຍສ່ວຍສາອາກອນຂອງລາວ ທະນາຄານມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 20% ຫຼື ອາກອນຕ່ຳສຸດໃນອັດຕາ 1% ຂອງລາຍຮັບ.

ສົມທຽບອາກອນທີ່ຄິດໄລ່ຈາກອັດຕາອາກອນທີ່ກຳນົດກັບລາຍຈ່າຍອາກອນທີ່ເຂົ້າໃນໃບລາຍງານຜົນໄດ້ຮັບ ມີດັ່ງນີ້:

| | 2010 LAK | % | 2009 USD | % |
|---|---|---|---|---|
| ລາຍຮັບ | 43,415,909,263 | | 17,479,296,862 | |
| ອາກອນຕາມອັດຕາທີ່ກຳນົດ | 434,159,093 | 1.0 | 174,792,969 | 1.0 |
| ອື່ນໆ | 15,073,560 | | (470,479) | |
| | 449,232,653 | | 174,322,490 | |

ການຄິດໄລ່ອາກອນກຳໄລ ແມ່ນຈະຖືກໄລ່ລຽງຄືນໃໝ່ ແລະ ຮັບຮອງໂດຍກົມວ່ສຍສາອາກອນ.

# ບົດລາຍງານຖານະການເງິນ

**ທະນາຄານອິນໂດຈີນ**
**ເອກະສານປະກອບຂອງບົດລາຍງານຖານະການເງິນ**
**ສຳລັບທ້າຍປີ ວັນທີ 31 ທັນວາ 2010**

## 19. ພັນທະສັນຍາ ແລະ ຂໍ້ຜູກພັນ

(a) ໃນການທຸລະກິດ

ໃນການດຳເນີນທຸລະກິດໂດຍທົ່ວໄປທະນາຄານມີພັນທະສັນຍາ ແລະ ຂໍ້ຜູກພັນທາງກົດໝາຍກັບລູກຄ້າຄື:

| | 2010<br>LAK | 2009<br>LAK |
|---|---|---|
| ໜັງສືສິນເຊື່ອ | 32,337,766,446 | 28,567,430,496 |
| ໜັງສືຄ້ຳປະກັນ | 1,741,275,300 | 1,833,883,328 |
| | **34,079,041,746** | **30,401,313,824** |

**(b) ຂໍ້ຜູກພັນທາງດ້ານອາກອນ**

ລະບົບສ່ວຍສາອາກອນຂອງ ສ.ປ.ປ.ລາວເປັນເລື່ອງຂ້ອນຂ້າງໃໝ່ ແລະ ມີອາກອນຫຼາຍຮູບແບບ ແລະ ຍັງມີການປ່ຽນແປງຢູ່ເລື້ອຍໆ, ເຊິ່ງມີຫຼາຍເທື່ອທີ່ຍັງບໍ່ທັນລະອຽດຈະແຈ້ງ, ມີລັກສະນະຂັດແຍ່ງກັນເຊິ່ງຈຳເປັນຕ້ອງມີການຕີຄວາມໝາຍ. ມີຫຼາຍເທື່ອທີ່ການຕີຄວາມໝາຍແຕກຕ່າງກັນພາຍໃນກົມສວຍສາອາກອນເອງ ແລະ ຝ່າຍທີ່ມີອຳນາດ. ບັນດາອາກອນແມ່ນຕ້ອງຖືກກວດກາ ແລະ ໄລ່ລຽງຄືນໂດຍຄະນະກວດກາເຊິ່ງມີສິດຕາມກົດໝາຍໃນການປະຕິບັດລະບຽບ, ປັບໄໝ ແລະ ເກັບຄ່າປ່ວຍການຕ່າງໆ.

ເຫດຜົນເຫຼົ່ານີ້ອາດເຮັດໃຫ້ເກີດຄວາມສ່ຽງທາງດ້ານອາກອນໃນສ.ປ.ປ.ລາວ ເຊິ່ງອາດຈະຫຼາຍກວ່າທີ່ມີໃນປະເທດອື່ນໆ. ຜູ້ບໍລິຫານເຊື່ອໝັ້ນວ່າມັນໄດ້ມີການສະໜອງຢ່າງພຽງພໍສຳລັບພັນທະອາກອນບົນພື້ນຖານການຕີຄວາມໝາຍຂອງກົດໝາຍສວຍສາອາກອນ. ເຖິງຢ່າງໃດກໍ່ຕາມພາກສ່ວນທີ່ມີອຳນາດທີ່ກ່ຽວຂ້ອງອາດມີການຕີຄວາມໝາຍແຕກຕ່າງກັນ ແລະ ກໍ່ໃຫ້ເກີດຜົນກະທົບອັນໃຫຍຫຼວງ.

## 20. ພັນທະສັນຍາຄ້າງຊຳລະ

ຕາມວັນທີຂອງໃບສະຫຼຸບຊັບສິນບັດທະນາຄານອິນໂດຈີນບໍ່ມີພັນທະສັນຍາຄ້າງຊຳລະ(ເຊິ່ງໃນປີ2009 ມີ: 88,636ໂດລາ)

## 21. ລະບຽບການຄຸ້ມຄອງຄວາມສ່ຽງທາງການເງິນ

ກຳມະວິທີ ແລະ ລະບຽບການ ທີ່ຖືກນຳໃຊ້ໂດຍທະນາຄານເພື່ອຄຸ້ມຄອງຄວາມສ່ຽງທີ່ເກີດຈາກການດຳເນີນທຸລະກຳມີດັ່ງຕໍ່ໄປນີ້:

**(a) ຄວາມສ່ຽງໃນການດຳເນີນງານ**

ຄວາມສ່ຽງໃນການດຳເນີນງານທີ່ຂາດທຶນເຊິ່ງເປັນຜົນມາຈາກຄວາມບໍ່ພຽງພໍ ຫຼື ຄວາມບົກຜ່ອງຂອງຂັ້ນຕອນການດຳເນີນງານພາຍໃນ, ບຸກຄະລາກອນ ແລະ ລະບົບ ຄວນຖືກບໍລິຫານບົນຂັ້ນຕອນການຄຸ້ມຄອງຄວາມ ສ່ຽງ, ມີການຕິດຕາມ ແລະ ລາຍງານກ່ຽວກັບທຸລະກຳທີ່ເພາະສົມໂດຍໜ່ວຍງານຄວບຄຸມ ແລະ ສະໜັບສະໜູນທີ່ເປັນເອກະລາດ ແລະ ຖືກຊີ້ນຳໂດຍຄະນະບໍລິຫານ.

# ບົດລາຍງານຖານະການເງິນ

## ທະນາຄານອິນໂດຈີນ
## ເອກະສານປະກອບຂອງບົດລາຍງານຖານະການເງິນ
## ສຳລັບທ້າຍປີ ວັນທີ 31 ທັນວາ 2010

## 21. ລະບຽບການຄຸ້ມຄອງຄວາມສ່ຽງທາງການເງິນ (ຕໍ່)

ການຄຸ້ມຄອງຄວາມສ່ຽງໃນການດຳເນີນງານແມ່ນຮຽກຮ້ອງໃຫ້ມີການວາງໂຄງຮ່າງການຈັດຕັ້ງທີ່ຈະແຈ້ງ, ມີພາລະບົດບາດ ແລະ ລະບຽບການຄວບຄຸມ. ມີລະບຽບການຄວບຄຸມພາຍໃນທີ່ຮອບດ້ານ ແລະ ມີການປະເມີນ. ສິ່ງເຫຼົ່ານີ້ລວມມີການວາງລາຍເຊັນສຳລັບການອະນຸມັດ, ວາງວິທີການຄວບຄຸມລະບົບ, ປັບປຸງຂັ້ນຕອນການດຳເນີນງານ ແລະ ເອກະສານທີ່ກ່ຽວຂ້ອງ. ສິ່ງເຫຼົ່ານີ້ຄວນຖືກທົບທວນຄືນຢ່າງຕໍ່ເນື່ອງເພື່ອປ້ອງກັນຄວາມສ່ຽງໃນການດຳເນີນງານຂອງທະນາຄານ

### (b) ຄວາມສ່ຽງທາງດ້ານສິນເຊື່ອ

ຄວາມສ່ຽງທາງດ້ານສິນເຊື່ອ ແມ່ນໂອກາດທີ່ຈະສູນເສຍລາຍໄດ້ ແລະ ເງິນຕົ້ນໃນຮູບແບບຂອງການຫັກຄ່າ ເຊື່ອມແບບສະເພາະ ເຊິ່ງເປັນຜົນມາຈາກການຄ້າງຊຳລະຂອງຜູ້ທີ່ຢືມເງິນ ຫຼືຈາກພາກລັດ ຜ່ານການໃຫ້ກູ້ຢືມ, ແລະ ການລົງທຶນຕ່າງໆ.

ຄວາມສ່ຽງທາງດ້ານສິນເຊື່ອຫຼັກໆເກີດຈາກເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ. ມູນຄ່າຂອງສິນເຊື່ອໃນທີ່ນີ້ສະ ແດງເຖິງມູນຄ່າເບື້ອງຊັບສິນໃນໃບສະຫຼຸບຊັບສິນບັດ. ການປ່ອຍສິນເຊື່ອ ແມ່ນປະຕິບັດຕາມລະບຽບການສິນ ເຊື່ອຂອງທະນາຄານ ເພື່ອໃຫ້ໝັ້ນໃຈວ່າຈະໄດ້ຮັບຜົນສຳເລັດຕາມເປົ້າໝາຍ ເຊັ່ນ: ຖານະເງິນກູ້ມີຄວາມເຂັ້ມ ແຂງ ແລະ ສະພາບດີ ເຮັດໃຫ້ຄວາມສ່ຽງທາງດ້ານການເງິນມີການປ່ຽນແປງໃນທາງບວກ. ລະບຽບການສິນເຊື່ອປະກອບດ້ວຍລະບຽບໃນການໃຫ້ກູ້ຢືມ, ລະບຽບສຳລັບຫຼັກຊັບຄ້ຳປະກັນ ແລະ ຂັ້ນຕອນການອະນຸມັດ ສິນເຊື່ອ, ລວມທັງລະບົບພາຍໃນສຳລັບການຈັດປະເພດລູກຄ້າຂອງທະນາຄານ.

### (c) ຄວາມສ່ຽງທາງການຕະຫຼາດ

ຄວາມສ່ຽງທາງການຕະຫຼາດ ແມ່ນຄວາມສ່ຽງໃນການຂາດທຶນອັນເນື່ອງມາຈາກການເຄື່ອນໄຫວທີ່ບໍ່ເພິ່ງປະສົງ ໃນລະດັບລາຄາ ແລະ ອັດຕາໃນທ້ອງຕະຫຼາດ, ມີ 2 ອົງປະກອບຫຼັກຄື: ຄວາມສ່ຽງໃນການແລກ ປ່ຽນເງິນຕາຕ່າງປະເທດ ແລະ ຄວາມສ່ຽງຂອງອັດຕາດອກເບ້ຍ.

### (i) ຄວາມສ່ຽງໃນການແລກປ່ຽນເງິນຕາຕ່າງປະເທດ

ຄວາມສ່ຽງໃນການແລກປ່ຽນເງິນຕາຕ່າງປະເທດ ແມ່ນອີງໃສ່ຄວາມສ່ຽງຈາກການເຄື່ອນໄຫວທີ່ບໍ່ເພິ່ງປະສົງຂອງອັດຕາແລກປ່ຽນຕາມຖານະເງິນຕາຕ່າງປະເທດໃນແຕ່ລະໄລຍະ. ການແລກປ່ຽນເງິນຕາໃນ ຮູບແບບເປີດ ຄວນຖືກຕິດຕາມ ໂດຍອີງໃສ່ລະບຽບໃນການດຳເນີນງານ, ກຳນົດລະດັບຖານະ ແລະ ລະດັບເສັ້ນແດນການຂາດທຶນລ່ວງໜ້າ.

### (ii) ຄວາມສ່ຽງຂອງອັດຕາດອກເບ້ຍ

ຄວາມສ່ຽງຂອງອັດຕາດອກເບ້ຍ ແມ່ນອີງໃສ່ຄວາມແປປວນຂອງລາຍຮັບດອກເບ້ຍສຸດທິ ອັນເນື່ອງມາຈາກການປ່ຽນແປງຂອງລະດັບອັດຕາດອກເບ້ຍ ແລະ ສ່ວນປະກອບຂອງຊັບສິນ ແລະ ໜີ້ສິນ. ຄວາມສ່ຽງຂອງອັດຕາດອກເບ້ຍ ແມ່ນຖືກຄຸ້ມຄອງໂດຍການຕິດຕາມຢ່າງໃກ້ຊິດຕໍ່ກັບຜົນໄດ້ຮັບຈາກການລົງທຶນລາຄາໃນທ້ອງຕະຫຼາດ, ເງິນທຶນ ແລະ ຜ່ານການວິໄຈຊ່ອງຫວ່າງຂອງອັດຕາດອກເບ້ຍ. ສາເຫດໃຫຍ່ຂອງການຫຼຸດລົງຂອງລາຍຮັບດອກເບ້ຍສຸດທິທີ່ມາຈາກການເສຍປຽບໃນການເຄື່ອນໄຫວຂອງອັດຕາດອກເບ້ຍຄວນຖືກຕິດຕາມໂດຍອີງໃສ່ລະດັບຄວາມສ່ຽງທີ່ຍອມຮັບໄດ້ທີ່ຖືກກຳນົດໄວ້.

### (iii) ຄວາມສ່ຽງໃນສະພາບຄ່ອງ ໝາຍເຖິງຄວາມສາມາດໃນການຮັກສາຊັບສິນໝູນວຽນຢ່າງພຽງພໍໃນການ ຊຳລະຕາມຂໍ້ຜູກພັນ ແລະ ພັນທະທາງການເງິນເມື່ອຄົບກຳນົດໃນມູນຄ່າທີ່ສົມເຫດສົມຜົນ

ຄະນະບໍລິຫານຂອງທະນາຄານຕິດຕາມຢ່າງໃກ້ຊິດຕໍ່ກັບກະແສເຂົ້າ-ອອກຂອງເງິນທັງໝົດ ແລະ ໄລຍະຄົບກຳນົດຜ່ານການລາຍງານຕາມແຕ່ລະໄລຍະ. ການເຄື່ອນໄຫວຂອງເງິນໃຫ້ກູ້ຢືມ ແລະ ເງິນຮັບຝາກຈາກລູກຄ້າແມ່ນຖືກຕິດຕາມ ແລະ ສະພາບຄ່ອງຖືກແກ້ໄຂເພື່ອໃຫ້ແນ່ໃຈວ່າມີຊັບສິນໝູນວຽນຢ່າງພຽງພໍໃນການຊຳລະຕາມຂໍ້ຜູກພັນ ແລະ ພັນທະທາງການເງິນເມື່ອຄົບກຳນົດ.

## ບົດລາຍງານຖານະການເງິນ

### ທະນາຄານອິນໂດຈີນ
### ໃບສະຫຼຸບຊັບສິນບັດ
### ໃນວັນທີ 31 ທັນວາ 2010

ບັນດາໃບລາຍງານຕໍ່ໄປນີ້ບໍ່ແມ່ນພາກສ່ວນໜຶ່ງຂອງບົດລາຍງານຖານະການເງິນທີ່ຜ່ານການກວດສອບ, ແຕ່ນຳມາປະກອບເພື່ອເປັນຂໍ້ມູນເພີ່ມເຕີມເທົ່ານັ້ນໂດຍຜູ້ບໍລິຫານຂອງທະນາຄານ

| | 2010 LAK | 2010 USD equivalent |
|---|---|---|
| **ຊັບສິນ** | | |
| ເງິນສົດໃນຄັງ | 11,855,093,554 | 1,474,331 |
| ເງິນຝາກນຳທະນາຄານອື່ນ | 239,190,096,118 | 29,746,312 |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | 427,951,046,876 | 53,520,925 |
| ຊັບສິນອື່ນໆ | 55,623,903,847 | 6,617,733 |
| ເງິນຝາກພາກບັງຄັບ | 67,997,981,335 | 8,456,409 |
| ຊັບສິນບັດຄົງທີ່ມີຕົວຕົນ | 24,601,174,564 | 3,059,467 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 2,799,331,073 | 348,132 |
| **ລວມຍອດຊັບສິນ** | **830,018,627,367** | **103,223,309** |
| **ໜີ້ສິນ** | | |
| ເງິນຮັບຝາກຈາກລູກຄ້າ | 676,120,957,794 | 85,771,117 |
| ໜີ້ສິນອື່ນໆ | 21,329,048,160 | 965,609 |
| **ລວມຍອດໜີ້ສິນ** | **697,450,005,954** | **86,736,726** |
| **ທຶນ** | | |
| ທຶນຈົດທະບຽນ | 144,059,150,000 | 17,915,576 |
| ຄັງຈາກການແລກປ່ຽນເງິນຕາຕ່າງປະເທດ | 3,807,051,148 | 473,455 |
| ກຳໄລ/(ຂາດທຶນ)ສະສົມ | (15,297,579,735) | (1,902,447) |
| **ລວມຍອດທຶນ** | **132,568,621,413** | **16,486,587** |
| **ລວມຍອດໜີ້ສິນ ແລະ ທຶນ** | **830,018,627,367** | **103,223,309** |

ໃບລາຍງານນີ້ຖືກຫຼຸບເທົ່າເປັນເງິນໂດລາ ໂດຍນຳໃຊ້ອັດຕາແລກປ່ຽນປິດທ້າຍເດືອນ ສຳລັບວັນທີ 31 ທັນວາ 2010 ໃນອັດຕາ: 8,041ກີບ/ໂດລາ.

## ບົດລາຍງານຖານະການເງິນ

### ທະນາຄານອິນໂດຈີນ
### ໃບລາຍງານຜົນໄດ້ຮັບ
### ສຳລັບທ້າຍປີ ວັນທີ 31 ທັນວາ 2010

| | 2010<br>LAK | 2010<br>USD equivalent |
|---|---|---|
| ລາຍຮັບດອກເບ້ຍ | 40,405,501,641 | 5,024,935 |
| ລາຍຈ່າຍດອກເບ້ຍ | (23,242,099,043) | (2,890,449) |
| ລາຍຮັບຈາກດອກເບ້ຍສຸດທິ | 17,163,402,598 | 2,134,486 |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ | 3,010,407,622 | 374,382 |
| ລາຍຈ່າຍບໍລິຫານ ແລະ ລາຍຈ່າຍທົ່ວໄປ | (19,374,448,731) | (2,409,458) |
| ຄ່າເຊື່ອມຂອງເງິນກູ້ຢືມປົກກະຕິ | (813,038,023) | (101,112) |
| ກຳໄລ/(ຂາດທຶນ)ຈາກການແລກປ່ຽນເງິນຕາສຸດທິ | (3,648,967,607) | (453,795) |
| ຂາດທຶນກ່ອນຫັກອາກອນ | (3,662,644,141) | (455,496) |
| ອາກອນຕ່ຳສຸດ | (449,232,653) | (55,868) |
| **ຜົນໄດ້ຮັບສຸດທິປະຈຳປີ** | **(4,111,876,794)** | **(511,364)** |

ໃບລາຍງານນີ້ຖືກທຽບເທົ່າເປັນເງິນໂດລາ ໂດຍນຳໃຊ້ອັດຕາແລກປ່ຽນປິດທ້າຍເດືອນ ສຳລັບວັນທີ 31 ທັນວາ 2010 ໃນອັດຕາ: 8,041ກີບ/ໂດລາ.

# ບົດລາຍງານຖານະການເງິນ

## ທະນາຄານອິນໂດຈີນ
## ໃບລາຍງານການປ່ຽນແປງຂອງທຶນ
## ສຳລັບທ້າຍປີ ວັນທີ 31 ທັນວາ 2010

| | ທຶນຈົດທະບຽນ | ຄັງຈາກການແລກປ່ຽນເງິນຕາຕ່າງປະເທດ | ກຳໄລ/(ຂາດທຶນ) ສະສົມ | ລວມທັງໝົດ |
|---|---|---|---|---|
| ວັນທີ 01 ມັງກອນ 2009 | 130,866,201,148 | - | (2,287,960,441) | 128,578,240,707 |
| ຜົນໄດ້ຮັບສຸດທິປະຈຳປີ | - | - | (8,897,742,500) | (8,897,742,500) |
| ຍອດເຫຼືອທ້າຍ ວັນທີ 31 ທັນວາ 2009 | 130,866,201,148 | - | (11,185,702,941) | 119,680,498,207 |
| ການແລກປ່ຽນເງິນຕາຕ່າງປະເທດ | (3,807,051,148) | 3,807,051,148 | - | - |
| ການເພີ່ມທຶນພາຍໃນປີ | 17,000,000,000 | - | - | 17,000,000,000 |
| ຜົນໄດ້ຮັບສຸດທິປະຈຳປີ | - | - | (4,111,876,794) | (4,111,876,794) |
| ຍອດເຫຼືອທ້າຍ ວັນທີ 31 ທັນວາ 2010 | 144,059,150,000 | 3.807,051,148 | (15,297,579,735) | 132,568,621,413 |

| | ທຶນຈົດທະບຽນ | ຄັງຈາກການແລກປ່ຽນເງິນຕາຕ່າງປະເທດ | ກຳໄລ/(ຂາດທຶນ) ສະສົມ | ລວມທັງໝົດ |
|---|---|---|---|---|
| ວັນທີ 01 ມັງກອນ 2009 | 16,274,866 | - | (284,537) | 15,990,329 |
| ຜົນໄດ້ຮັບສຸດທິປະຈຳປີ | - | - | (1,106,547) | (1,106,547) |
| ຍອດເຫຼືອທ້າຍ ວັນທີ 31 ທັນວາ 2009 | 16,274,866 | - | (1,391,084) | 14,883,782 |
| ການແລກປ່ຽນເງິນຕາຕ່າງປະເທດ | (473,455) | 473,455 | - | - |
| ການເພີ່ມທຶນພາຍໃນປີ | 2,114,165 | - | - | 2,114,165 |
| ຜົນໄດ້ຮັບສຸດທິປະຈຳປີ | - | - | (511,364) | (511,364) |
| ຍອດເຫຼືອທ້າຍ ວັນທີ 31 ທັນວາ 2010 | 17,915,576 | 473,455 | (1,902,448) | 16,486,583 |

ໃບລາຍງານນີ້ຖືກທຽບເທົ່າເປັນເງິນໂດລາ ໂດຍນຳໃຊ້ອັດຕາແລກປ່ຽນປິດທ້າຍເດືອນ ສຳລັບວັນທີ 31 ທັນວາ 2010 ໃນອັດຕາ: 8,041ກີບ/ໂດລາ.

# ໂຄງການເພື່ອສັງຄົມຂອງທະນາຄານອິນໂດຈີນໃນປີ2010

### ມອບເຄື່ອງຊ່ວຍເຫຼືອແກ່ນັກຮຽນທີ່ດ້ອຍໂອກາດ




23 ມັງກອນ 2010 - ເມືອງປາກງື່ມ

### ສະໜັບສະໜູນການແຂ່ງຂັນຄະນິດສາດ




10 ເມສາ 2010 - ຫໍວັດທະນະທຳແຫ່ງຊາດ

### ມອບເຄື່ອງຊ່ວຍເຫຼືອແກ່ສູນຟື້ນຟູຄົນພິການ 489




30 ຕຸລາ 2010 - ເມືອງໄຊທານີ

### ມອບເຄື່ອງຊ່ວຍເຫຼືອແກ່ຜູ້ປະສົບໄພນ້ຳຖ້ວມ




06 ພະຈິກ 2010 - ບ້ານສັງທອງ

# ກິດຈະກຳຂອງທະນາຄານອິນໂດຈີນ ໃນປີ2010

ງານສະຫຼອງຄົບຮອບ 1ປີ




06 ກຸມພາ 2010 - ລາວໄອເຕັກ

ງານວາງສະແດງ 2010



13 - 16 ກຸມພາ 2010 - ຕະຫຼາດຫຼັກຊັບລາວ

ໜ່ວຍບໍລິການໃໝ່




05 ເມສາ 2010 - ໜ່ວຍບໍລິການໂອໂຕຊິດຕີ້

ງານລຽງສົມມະນາບຸນຄຸນລູກຄາ VIP 2010




23 ທັນວາ 2010 - ໂຮງແຮມລາວພລາຊາ


enhancing your value
ທະນາຄານອິນໂດຈີນ ຍິນດີໃຫ້ທ່ານໄດ້ຫລາຍກວ່າ

www.indochinabank.com

ບົດລາຍງານປະຈຳປີ

2010

enhancing your value